ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ

ເລກທີ 8877 /ຍທຂ. ນວ

ລົງວັນທີ 28 NOV 2025

# ໃບອະນຸຍາດປຸກສ້າງ

ປະເພດກິດຈະການ: **ອາຄານກໍ່ 01 ຊັ້ນ 05 ຫຼັງ ແລະ 03 ຊັ້ນ 02 ຫຼັງ, ຄວາມສູງ: 15,45 ແມັດ**.

- ອີງຕາມ ຂໍ້ 8 ມາດຕາ 76 ຂອງກົດໝາຍວ່າດ້ວຍຜັງເມືອງ ( ສະບັບປັບປຸງ ) ເລກທີ 40/ສພຊ, ລົງວັນທີ 16/11/2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງການປຸກສ້າງ ເລກທີ 2241 /ຍທຂ, ລົງວັນທີ 31/01/2019;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງເຂດນຳໃຊ້ທີ່ດິນແຜນຜັງເມືອງລວມ ຕົວເມືອງນະຄອນຫຼວງວຽງຈັນ ເລກທີ 12757/ຍທຂ, ລົງວັນທີ 24/05/2024;
- ອີງຕາມ ໃບສະເໜີຂໍອະນຸຍາດ ສະບັບເລກທີ **5009 / ຍທຂ.ນວ**, ລົງວັນທີ **13 / 10 / 2025**.

**ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເຫັນດີອອກ ໃບອະນຸຍາດກິດຈະການໃຫ້:**

ທ່ານ **ບໍລິສັດ ເຣຊັ່ນ ໄບໂອຟາມາ ຈຳກັດ**,

ອາຍຸ - ປີ, ສັນຊາດ - ,ອາຊີບ - ,ໂທລະສັບ: **020 9186 5689**.

ຢູ່ບ້ານ **ນາຂ່າ** ,ເມືອງ **ນາຊາຍທອງ** , ແຂວງ **ນະຄອນຫຼວງວຽງຈັນ**.

ທີ່ຕັ້ງກິດຈະການຢູ່ໃນເຂດ **ນອກເຂດແຜນຜັງຕົວເມືອງ**, ຖະໜົນ **ທາງຮ່ອມ, ກຳນົດເຂດສະຫງວນ 20 ແມັດ**,

ບ້ານ **ນາຂ່າ** ,ເມືອງ **ນາຊາຍທອງ** , ນະຄອນຫຼວງວຽງຈັນ,

ປຸກໃສ່ຕອນດິນອອກຊື່ **ທ້າວ ອານຸສັກ ດວງມາລາ**,

ມີໃບຕາດິນເລກທີ **708, 768, 1272** , ລົງວັນທີ **11 / 07 / 2025, 18 / 07 / 2025**.

ອອກໃຫ້ໂດຍ **ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ**.

ມີໃບ **ທະບຽນວິສາຫະກິດ, ໃບອະນຸຍາດໃຫ້ນຳໃຊ້ທີ່ດິນ**, ເລກທີ **030617/ຈທວ** , ລົງວັນທີ **30 / 09 / 2025.**

ເນື້ອທີ່ກິດຈະການອະນຸຍາດທັງໝົດ **26,437** ມ², **ຊາວຫົກພັນສີ່ຮ້ອຍສາມສິບເຈັດ** ຕາແມັດ.

ເປົ້າໝາຍການນຳໃຊ້ **ໂຮງງານ ຜະລິດຢາ**.

QR CODE ສະແດງຈຸດທີ່ຕັ້ງ

N

ເຄື່ອງໝາຍເສັ້ນ:

1. ເສັ້ນຂອບທາງ
2. ເສັ້ນໃຈກາງທາງ
3. ຂອບທາງຍ່າງ
4. ເສັ້ນຂອບດິນດ້ານໜ້າ
5. ແລວສາຍໄຟຟ້າ
6. ເຂດສະຫງວນທາງ
7. ເສັ້ນແຖວທີ່ກຳນົດໃຫ້ປຸກສ້າງ
8. ຂອບເຂດຕອນດິນ
9. ເສັ້ນຂອບຮ່ອງນ້ຳ

ມາດຕາສ່ວນ 1 : 7000




ຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ

ບຸນຍະວັດ ນິຣະໄຊຍ໌

**ຂໍ້ແນະນຳ:**

1. ໃບອະນຸຍາດປຸກສ້າງສະບັບນີ້, ກຳນົດໃຊ້ໄດ້ພາຍໃນ 6 ເດືອນ, ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ ແລະ ໃນກໍລະນີທີ່ບໍ່ໄດ້ລົງມືປຸກສ້າງຕາມວັນເວລາດັ່ງກ່າວ ເຈົ້າຂອງໂຄງການຕ້ອງໄດ້ຕໍ່ໃບອະນຸຍາດປຸກສ້າງອີກຄັ້ງ ຊຶ່ງກຳນົດເວລາໃຫ້ຕື່ມ 6 ເດືອນ ແລະ ອະນຸຍາດໃຫ້ຂໍຕໍ່ໄດ້ ແຕ່ພຽງຄັ້ງດຽວ, ຖ້າຫາກກາຍເວລາທີ່ໄດ້ກຳນົດໄວ້ ໃບອານຸຍາດແມ່ນໝົດອາຍຸການ ບໍ່ສາ ມາດນຳໃຊ້ໄດ້;
2. ໃນໄລຍະການກໍ່ສ້າງໂຄງການ, ເຈົ້າຂອງກິດຈະການຕ້ອງເຮັດໜັງສືສະເໜີຕໍ່ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເພື່ອລົງກວດກາຈຳນວນ 3 ຄັ້ງຄື: ໄລຍະເລີ່ມຕົ້ນໂຄງການ ( ປັກເສັ້ນແຖວ ), ໄລຍະກາງ ( ໄດ້ 50% ) ແລະ ໄລຍະສຳເລັດໂຄງການ ( ໄດ້ 100% ) ເພື່ອເປັນບ່ອນອີງໃນການອອກໃບຢັ້ງຢືນຄວາມຖືກຕ້ອງຂອງໂຄງການ;
3. ທຸກໆກໍລະນີທີ່ມີຜົນກະທົບຈາກການກໍ່ສ້າງເຊັ່ນ: ອາຄານ, ຖົມດິນ ຫຼື ຂຸດດິນ ແລະ ອື່ນໆ ແມ່ນເຈົ້າຂອງໂຄງການ ຕ້ອງຮັບຜິດຊອບທັງໝົດພຽງຜູ້ດຽວ ຕໍ່ໜ້າກົດໝາຍ ທາງແພ່ງ ແລະ ທາງອາຍາ;
4. ກ່ຽວກັບເຕັກນິກການປຸກສ້າງອາຄານຕ່າງໆ, ເຄນຍົກເຄື່ອງ ແມ່ນບໍລິສັດອອກແບບ, ບໍລິສັດທີ່ປຶກສາ, ບໍລິສັດກໍ່ສ້າງ ແລະ ເຈົ້າຂອງໂຄງການເປັນຜູ້ຮັບຜິດຊອບທັງໝົດ;
5. ການປຸກສ້າງອາຄານ ແລະ ການຖົມດິນ ເຈົ້າຂອງໂຄງການຕ້ອງປະຕິບັດຕາມແບບເຕັກນິກ ແລະ ໃບອະນຸຍາດຢ່າງເຂັ້ມງວດ ຖ້າຫາກບໍ່ປະຕິບັດ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ມີສິດຖອນໃບອະນຸຍາດຄືນ ພ້ອມທັງປະຕິບັດຕາມລະບຽບການ (ກໍລະນີຖົມດິນແມ່ນຈະບໍ່ອອກໃບອະນຸຍາດປຸກສ້າງໃຫ້).

**ຂໍ້ຫ້າມ:**

1. ດຳເນີນການປຸກສ້າງໂດຍບໍ່ໄດ້ຮັບອະນຸຍາດ, ປຸກສ້າງບໍ່ຖືກຕາມແບບແຜນຜັງ ທີ່ໄດ້ຮັບອະນຸຍາດ ຫຼື ດັດແກ້ແບບແຜນຜັງໂດຍບໍ່ໄດ້ຮັບການເຫັນດີ ຈາກອົງການຄຸ້ມຄອງການຜັງເມືອງ ທີ່ກ່ຽວຂ້ອງ;
2. ສຳຫຼວດ - ອອກແບບ ແລະ ກໍ່ສ້າງ ບໍ່ຖືກຕ້ອງຕາມແຜນຜັງຕົວເມືອງ, ລະບຽບການນຳໃຊ້ທີ່ດິນຜັງເມືອງ ແລະລະບຽບການອື່ນ ທີ່ກ່ຽວຂ້ອງ;
3. ດຳເນີນການປຸກສ້າງຢູ່ໃນເຂດຫວງຫ້າມ ທີ່ກຳນົດໄວ້ຢູ່ໃນແຜນຜັງຕົວເມືອງ ເພື່ອປົກປັກຮັກສາ ມໍລະດົກທາງດ້ານວັດທະນະທຳ, ສິ່ງແວດລ້ອມທຳມະຊາດ - ສັງຄົມ ແລະ ເຂດທີ່ມີຄວາມສ່ຽງຕໍ່ໄພພິບັດຕ່າງໆ;
4. ທັບມ້າງ, ຕໍ່ເຕີມ, ທຳລາຍ ສິ່ງປຸກສ້າງ ຫຼື ຊັບສິນສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງ;
5. ຂົນສົ່ງວັດສະດຸກໍ່ສ້າງ ໂດຍບໍ່ສອດຄ່ອງກັບລະບຽບການຂົນສົ່ງໃນຕົວເມືອງ ແລະ ບໍ່ຮັບປະກັນຄວາມປອດໄພ, ເຮັດໃຫ້ເກີດມີການຕົກເຮ່ຍ, ສ້າງຄວາມເປິະເປື້ອນໃສ່ໜ້າທາງ, ສະຖານທີ່ສາທາລະນະ ຫຼື ສະຖານທີ່ຂອງຜູ້ອື່ນ;